ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 1154/ຖວທ

ນະຄອນຫຼວງວຽງຈັນ, ວັນທີ 6/11/2019

# ຂໍ້ຕົກລົງ
# ວ່າດ້ວຍ ການທ່ອງທ່ຽວ ປອດຄວັນຢາສູບ

- ອີງຕາມ ກົດໝາຍ ວ່າດ້ວຍການທ່ອງທ່ຽວ ສະບັບເລກທີ 32/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ກົດໝາຍ ວ່າດ້ວຍການຄວບຄຸມຢາສູບ ສະບັບເລກທີ 07/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມ ໜັງສືສະເໜີຂອງກົມອານາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງສາທາລະນະສຸກ ສະບັບເລກທີ 225/ກອສ, ລົງວັນທີ 21 ກຸມພາ 2019.

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ຕິດຕາມກວດກາ ການຄວບຄຸມຢາສູບໃນຂະແໜງການທ່ອງທ່ຽວ ໃຫ້ປອດຄວັນຢາສູບ ແລະ ການສູບຢາ ແນໃສ່ເຮັດໃຫ້ສະພາບແວດລ້ອມດ້ານການທ່ອງທ່ຽວ ປອດຄວັນຢາສູບ ກາຍເປັນການທ່ອງທ່ຽວສະອາດ, ສີຂຽວ, ມີຄວາມຍືນຍົງ, ອະນຸລັກສິ່ງແວດລ້ອມ, ປົກປ້ອງສຸຂະພາບຂອງບຸກຄົນ ແລະ ນັກທ່ອງທ່ຽວ ຢູ່ ສປປ ລາວ ໃຫ້ປອດຄວັນຢາສູບ.

### ມາດຕາ 2 ການທ່ອງທ່ຽວ ປອດຄວັນຢາສູບ

ການທ່ອງທ່ຽວ ປອດຄວັນຢາສູບ ແມ່ນ ການທ່ອງທ່ຽວທີ່ປາສະຈາກຄວັນຢາສູບ ແລະ ການສູບຢາທຸກຮູບແບບ ໃນຂົງເຂດການທ່ອງທ່ຽວ ທີ່ຕິດປ້າຍຫ້າມສູບຢາ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້ :

1. ເຂດປອດຄວັນຢາສູບ ໃນຂະແໜງການທ່ອງທ່ຽວ ໝາຍເຖິງ ສະຖານທີ່ທ່ອງທ່ຽວ, ສະຖານທີ່ບັນເທີງ, ຮ້ານອາຫານ, ສວນອາຫານ, ຮ້ານກິນດື່ມ, ສະຖານທີ່ພັກແຮມ, ສຳນັກງານຫ້ອງການຂອງລັດ ແລະ ເອກະຊົນ, ການນຳທ່ຽວ ແລະ ສະຖານທີ່ບໍລິການ ທີ່ກ່ຽວຂ້ອງກັບການທ່ອງທ່ຽວ ຢູ່ ສປປ ລາວ ທີ່ມີປ້າຍຫ້າມສູບຢາ;
2. ການຄວບຄຸມຢາສູບ ແລະ ການສູບຢາ ໃນຂະແໜງການທ່ອງທ່ຽວ ໝາຍເຖິງ ການນຳໃຊ້ມາດຕະການທາງດ້ານກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາ, ຈຳກັດ ແລະ ກຳຈັດການຈຳໜ່າຍ, ການຊື້-ຂາຍ ຜະລິດຕະພັນຢາສູບທຸກປະເພດ ແລະ ການສູບຢາທຸກຮູບແບບ ຢູ່ໃນເຂດປອດຄວັນຢາສູບ;
3. ສຳນັກງານ ຫ້ອງການຂອງລັດ ໝາຍເຖິງ ສະຖານທີ່ເຮັດວຽກຂອງລັດຖະການ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ທີ່ເຄື່ອນໄຫວວຽກງານ ກ່ຽວກັບການທ່ອງທ່ຽວ;
4. ສຳນັກງານຫ້ອງການຂອງເອກະຊົນ ໝາຍເຖິງ ສະຖານທີ່ເຮັດວຽກ ຂອງຫົວໜ່ວຍທຸລະກິດດ້ານການທ່ອງ

ທ່ຽວ ໃນຂອບເຂດທົ່ວປະເທດ;

5. ສະຖານທີ່ບັນເທີງ ໝາຍເຖິງ ສະຖານທີ່ຈັດງານສ້າງຄວາມເບີກບານມ່ວນຊື່ນໃນຮູບແບບຕ່າງໆ ທັງພາຍໃນ ແລະ ພາຍນອກຕຶກ, ອາຄານ ແລະ ສໍານັກງານຫ້ອງການ ທີ່ຕິດພັນກັບການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ;
6. ຮ້ານອາຫານ, ພັດຕາຄານ, ສວນອາຫານ ແລະ ຮ້ານກິນດື່ມ ໝາຍເຖິງ ສະຖານທີ່ບໍລິການອາຫານປະເພດຕ່າງໆ ເພື່ອການກິນ-ດື່ມ ໃນຮູບແບບຕ່າງໆ ຂອງນິຕິບຸກຄົນ ແລະ ການຈັດຕັ້ງທີ່ຕິດພັນກັບການທ່ອງທ່ຽວໃນຂອບເຂດທົ່ວປະເທດ;
7. ສະຖານທີ່ພັກແຮມ ໝາຍເຖິງ ໂຮງແຮມ, ລີສອດ, ເຮືອນພັກ, ຫ້ອງພັກ, ບ່ອນພັກແຮມຂອງນັກຂັບຂີ່, ບ່ອນພັກແຮມເຄື່ອນທີ່, ຄ້າຍພັກແຮມ, ເຮືອນພັກແຮມ, ຕຶກອາຄານ ທີ່ມີຫ້ອງສຸດພັກແຮມ (ອາພາດເມນ) ແລະ ສະຖານທີ່ພັກເຊົາອື່ນໆ ເພື່ອການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ;
8. ການນໍາທ່ຽວ ໝາຍເຖິງ ການບໍລິການດ້ານການນໍາທ່ຽວ ແລະ ການຂົນສົ່ງນັກທ່ອງທ່ຽວ ເພື່ອການທ່ອງທ່ຽວ ຊຶ່ງລວມເອົາຜູ້ໃຫ້ບໍລິການດ້ານການທ່ອງທ່ຽວ ເຊັ່ນ ຫົວໜ່ວຍທຸລະກິດນໍາທ່ຽວ ຫຼື ບໍລິສັດນໍາທ່ຽວທຸກປະເພດ, ພາຫານະຂົນສົ່ງນັກທ່ອງທ່ຽວ, ພະນັກງານຂັບລົດຂົນສົ່ງນັກທ່ອງທ່ຽວ, ພະນັກງານນໍາທ່ຽວ ແລະ ຜູ້ໃຫ້ບໍລິການ ກ່ຽວກັບການທ່ອງທ່ຽວ;
9. ນັກທ່ອງທ່ຽວ ໝາຍເຖິງ ບຸກຄົນຕາມທີ່ກົດໝາຍ ວ່າດ້ວຍ ການທ່ອງທ່ຽວ ກໍານົດ;

### ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບການທ່ອງທ່ຽວ ປອດຄວັນຢາສູບ

ລັດ ສົ່ງເສີມການທ່ອງທ່ຽວ ທໍາມະຊາດ, ວັດທະນະທໍາ ແລະ ປະຫວັດສາດ ເປັນມິດກັບສິ່ງແວດລ້ອມ, ມີຄວາມຍືນຍົງຕາມທິດສີຂຽວ ແລະ ການພັດທະນາອຸດສາຫະກໍາທ່ອງທ່ຽວ ປອດຄວັນຢາສູບ ໂດຍການໂຄສະນາເຜີຍແຜ່ເຖິງຜົນຮ້າຍຂອງຄວັນຢາສູບ ແລະ ການສູບຢາ, ການໃຫ້ຂໍ້ມູນຂ່າວສານ, ການປູກຈິດສໍານຶກ, ການປຸກລະດົມຂົນຂວາຍ, ຕ້ານການສູບຢາທຸກປະເພດ ທຸກຮູບແບບ, ຍົກສູງຄຸນນະພາບ, ມາດຕະຖານ, ຄວາມປອດໄພຕໍ່ສຸຂະພາບ, ຊັບສິນຂອງບຸກຄົນ, ນິຕິບຸກຄົນ, ນັກທ່ອງທ່ຽວ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການທ່ອງທ່ຽວ ຢູ່ ສປປ ລາວ.

### ມາດຕາ 5 ຫຼັກການ

ການທ່ອງທ່ຽວ ປອດຄວັນຢາສູບ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້ :

1. ຕ້ອງສອດຄ່ອງກັບແນວທາງ ນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ, ຍຸດທະສາດການທ່ອງທ່ຽວ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນພັດທະນາການທ່ອງທ່ຽວ;
2. ຮັບປະກັນ ຄວາມສະຫງົບ, ປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ, ມີການຕິດຕາມກວດກາປະເມີນຜົນ ຢ່າງລວມສູນ ທົ່ວປະເທດ, ສົ່ງເສີມການມີສ່ວນຮ່ວມຂອງນັກທ່ອງທ່ຽວ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຢ່າງກວ້າງຂວາງ ເພື່ອຄວາມຍືນຍົງ;
3. ຮັບປະກັນການຄວບຄຸມຢາສູບ ແລະ ຈໍາກັດການສູບຢາ ໃນຂະແໜງການທ່ອງທ່ຽວ ໃຫ້ສອດຄ່ອງກັບຫຼັກການຂອງສາກົນ, ລະບຽບກົດໝາຍ, ເຊື່ອມໂຍງກັບພາກພື້ນ ແລະ ຫຼັກສາກົນ ເພື່ອປົກປ້ອງສຸຂະພາບຂອງບຸກຄົນ ແລະ ນັກທ່ອງທ່ຽວ ຢ່າງມີຄຸນນະພາບ, ຢູ່ໃນສະພາບແວດລ້ອມທີ່ດີ, ມີຄວາມປອດໄພຈາກມົນລະພິດ ຄວັນຢາສູບ, ສ້າງບັນຍາກາດການທ່ອງທ່ຽວໃຫ້ກາຍເປັນການທ່ອງທ່ຽວສະອາດ, ສີຂຽວ ແລະ ມີຄວາມຍືນຍົງ.

### ມາດຕາ 6 ພັນທະຂອງບຸກຄົນ, ການຈັດຕັ້ງ ແລະ ນັກທ່ອງທ່ຽວ

ບຸກຄົນ, ນັກທ່ອງທ່ຽວ ພາຍໃນ, ຕ່າງປະເທດ ແລະ ການຈັດຕັ້ງ ທຸກພາກສ່ວນທີ່ກ່ຽວຂ້ອງໃນສັງຄົມ ທີ່ຕິດພັນກັບການທ່ອງທ່ຽວ ລ້ວນແຕ່ມີພັນທະປະກອບສ່ວນເຂົ້າໃນວຽກງານການຄຸ້ມຄອງ, ຕິດຕາມກວດກາການຄວບຄຸມຢາສູບ, ຈໍາກັດ ແລະ ກໍາຈັດການສູບຢາໃນຂະແໜງການທ່ອງທ່ຽວ ໃຫ້ກາຍເປັນການທ່ອງທ່ຽວ ປອດຄວັນຢາສູບ,

ເປັນແບບຢ່າງທີ່ດີ, ເຄົາລົບ ແລະ ປະຕິບັດຂໍ້ກຳນົດກົດໝາຍ, ປ້າຍຫ້າມສູບຢາ, ມີສ່ວນຮ່ວມໃນການໂຄສະນາເຜີຍແຜ່, ການສຶກສາອົບຮົມ, ການປູກຈິດສຳນຶກໃຫ້ເຍົາວະຊົນ, ບຸກຄົນ ແລະ ນັກທ່ອງທ່ຽວ, ຮັບຮູ້ ແລະ ເຂົ້າໃຈເຖິງຜົນຮ້າຍຂອງການສູບຢາ ແລະ ຄວັນຢາສູບ ທີ່ທຳລາຍລະບົບພາຍໃນ ອະໄວຍະວະຂອງຮ່າງກາຍ.

### ມາດຕາ 7 ຂອບເຂດການນຳໃຊ້ຂໍ້ຕົກລົງ

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ນັກທ່ອງທ່ຽວ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ, ສະຖາບັນຄອບຄົວ ແລະ ທຸກພາກສ່ວນ ທີ່ມີສ່ວນກ່ຽວຂ້ອງກັບການທ່ອງທ່ຽວ ຢູ່ ສປປ ລາວ.

### ມາດຕາ 8 ການຮ່ວມມືສາກົນ

ລັດ ສົ່ງເສີມ ການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ, ອານຸພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກນິກ, ເຕັກໂນໂລຢີ, ການທັດສະນະສຶກສາ, ການຝຶກອົບຮົມ, ການກໍ່ສ້າງຍົກລະດັບພະນັກງານ, ວິຊາການ ໃນຂະແໜງການທ່ອງທ່ຽວ ແລະ ການຊ່ວຍເຫຼືອ ດ້ານຕ່າງໆ ເພື່ອເຮັດໃຫ້ວຽກງານການຄວບຄຸມຢາສູບ ແລະ ການຄວບຄຸມການສູບຢາ ທຸກຮູບແບບ ໃນຂະແໜງການທ່ອງທ່ຽວ ໃຫ້ມີປະສິດທິພາບ, ມີປະສິດທິຜົນ ແລະ ກາຍເປັນການທ່ອງທ່ຽວສະອາດ, ສີຂຽວ ຕາມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ກາຍເປັນການທ່ອງທ່ຽວ ປອດຄວັນຢາສູບ ໂດຍສອດຄ່ອງກັບສັນຍາ ແລະສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ການແນະນຳ, ເຂດປອດຄວັນຢາສູບ ແລະ ການກຳນົດເຂດສູບຢາ

### ມາດຕາ 9 ເຂດປອດຄວັນຢາສູບ

ເຂດປອດຄວັນຢາສູບໃນຂະແໜງການທ່ອງທ່ຽວ ຫຼື ສະຖານທີ່ຫ້າມສູບຢາ ແລະ ສະຖານທີ່ສະເພາະສູບຢາ ນອກຈາກ ກົດໝາຍ ວ່າດ້ວຍ ການຄວບຄຸມຢາສູບ ສະບັບເລກ ທີ 07/ສພຊ, ລົງວັນທີ 26 ພະຈິກ 2019 (ມາດຕາ 38) ກຳນົດແລ້ວ, ຂໍ້ຕົກລົງສະບັບນີ້ ຍັງໄດ້ຜັນຂະຫຍາຍບາງມາດຕາຂອງກົດໝາຍ ສະບັບດັ່ງກ່າວ ໃຫ້ເປັນບ່ອນອີງ, ສະດວກ ແລະ ເຂົ້າໃຈງ່າຍໃນການຈັດຕັ້ງປະຕິບັດ ຊຶ່ງເອີ້ນວ່າ ເຂດປອດຄວັນຢາສູບໃນຂະແໜງການທ່ອງທ່ຽວ ດັ່ງນີ້ :

1. ສະຖານທີ່ທ່ອງທ່ຽວທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ທີ່ມີປ້າຍຫ້າມສູບຢາ;
2. ສວນສາທາລະນະ ແລະ ສວນສະໜຸກ ເພື່ອການທ່ອງທ່ຽວ ທີ່ມີປ້າຍຫ້າມສູບຢາ;
3. ສະຖານທີ່ພັກແຮມ ຊຶ່ງປະກອບດ້ວຍ ໂຮງແຮມ, ເຮືອນພັກ, ລີສອດ, ຫ້ອງພັກ, ບ່ອນພັກແຮມຂອງນັກຂັບຂີ່, ບ່ອນພັກແຮມເຄື່ອນທີ່, ຄ້າຍພັກແຮມ, ເຮືອນພັກແຮມ (ໂຮມສະເຕ), ຕຶກອາຄານ ທີ່ມີຫ້ອງສູດພັກແຮມ (ອາພາດເມນ) ແລະ ອື່ນໆ ຊຶ່ງເປັນບ່ອນພັກແຮມ ເພື່ອການທ່ອງທ່ຽວ ທີ່ມີປ້າຍຫ້າມສູບຢາ;
4. ຮ້ານອາຫານ, ພັດຕາຄານ, ສວນອາຫານ ແລະ ຮ້ານກິນດື່ມ ທີ່ມີປ້າຍຫ້າມສູບຢາ;
5. ສະຖານທີ່ບັນເທີງ ຊຶ່ງປະກອບດ້ວຍ ຮ້ານດິສະໂກເທັກ, ຮ້ານໄນຄຣັບ, ຮ້ານພັບ, ຮ້ານສະເນັກບາຣ, ຮ້ານບາຣ, ຮ້ານຄາຣາໂອເກະ ແລະ ສະຖານທີ່ຈັດງານເອນເລີດ ທີ່ມີປ້າຍຫ້າມສູບຢາ;
6. ພາຫານະຂົນສົ່ງນັກທ່ອງທ່ຽວ ຊຶ່ງປະກອບດ້ວຍ ລົດຂົນສົ່ງນັກທ່ອງທ່ຽວ, ເຮືອບິນ, ເຮືອ ແລະ ພາຫານະສຳລັບຂົນສົ່ງນັກທ່ອງທ່ຽວ ທຸກຮູບແບບ ທີ່ນຳໃຊ້ຂົນສົ່ງນັກທ່ອງທ່ຽວ ທີ່ມີປ້າຍຫ້າມສູບຢາ;
7. ສະຖານທີ່ບໍລິສັດນຳທ່ຽວທຸກປະເພດ ທີ່ມີປ້າຍຫ້າມສູບຢາ;
8. ຕຶກອາຄານ, ສຳນັກງານ, ຫ້ອງການຂອງພາກລັດ ແລະ ເອກະຊົນ ທີ່ນຳໃຊ້ເຂົ້າໃນວຽກງານການທ່ອງທ່ຽວ ທີ່ມີປ້າຍຫ້າມສູບຢາ;
9. ຮ້ານອາບ ອົບ ນວດ, ສະປາ, ນວຍເພື່ອສຸຂະພາບ, ນວດແຜນບູຮານ ແລະ ກິດຈະກຳ ກິດຈະການນວດ ທຸກປະເພດ ທີ່ມີປ້າຍຫ້າມສູບຢາ;
10. ຫ້ອງນ້ຳສາທາລະນະ ເພື່ອການທ່ອງທ່ຽວ ທີ່ມີປ້າຍຫ້າມສູບຢາ;
11. ສະຖານທີ່ຈັດກິດຈະກຳອື່ນໆ ເພື່ອການທ່ອງທ່ຽວ ຢູ່ ສປປ ລາວ ທີ່ມີປ້າຍຫ້າມສູບຢາ.

### ມາດຕາ 10 ການກຳນົດເຂດສູບຢາ

ໃນກໍລະນີຈຳເປັນ ພາກສ່ວນທີ່ກ່ຽວຂ້ອງກັບການທ່ອງທ່ຽວ ປອດຄວັນຢາສູບ ອາດຈະມີການກຳນົດເຂດສູບຢາ ສຳລັບຜູ້ເສບ ຫຼື ສູບຢາ ຢູ່ຕາມຈຸດທີ່ເໝາະສົມ, ການກຳນົດເຂດສູບຢາ ຕ້ອງຢູ່ຫ່າງໄກຈາກເຂດການທ່ອງທ່ຽວປອດຄວັນຢາສູບ ຫຼື ພາຍນອກເຂດສາທາລະນະ ແລະ ຊຸມຊົນການທ່ອງທ່ຽວ ຢ່າງໜ້ອຍ ສິບແມັດຂຶ້ນໄປ.

ສຳລັບ ພາຍໃນຕຶກອາຄານ ແລະ ສຳນັກງານຫ້ອງການ ທີ່ມີສ່ວນກ່ຽວພັນກັບການທ່ອງທ່ຽວ ໃນກໍລະນີຈຳເປັນອາດຈະກຳນົດໃຫ້ມີຫ້ອງສະເພາະສູບຢາ ໂດຍມີຄ່າບໍລິການ ການນຳໃຊ້ຫ້ອງ ຕາມກຳນົດເວລາຂອງສະຖານທີ່ສະເພາະສູບຢາ ນັ້ນໆ, ຫ້ອງສະເພາະສູບຢາ ຕ້ອງຮັບປະກັນບໍ່ມີກິ່ນ ແລະ ບໍ່ມີຄວັນຢາສູບ ອອກມາລົບກວນພາຍນອກ ແລະ ບໍລິເວນໃກ້ຄຽງ ຢ່າງເດັດຂາດ.

### ມາດຕາ 11 ການກຳຈັດຄວັນຢາສູບ

ການກຳຈັດຄວັນຢາສູບ ຢູ່ພາຍໃນເຂດປອດຄວັນຢາສູບ, ໃນກໍລະນີຈຳເປັນ ຕ້ອງມີຫ້ອງສະເພາະ ທີ່ມີລະບົບຟອກດູດອາກາດ ຫຼື ກິ່ນ ແລະ ຄວັນຢາສູບອອກຈາກຕຶກອາຄານ ສະຖານທີ່ ຫຼື ເຂດປອດຄວັນຢາສູບ ໂດຍການນຳໃຊ້ເຕັກໂນໂລຢີ ແລະ ເຄື່ອງມືວັດຖຸປະກອບທີ່ທັນສະໄໝ, ມີຄຸນນະພາບ ແລະ ມາດຕະຖານສາກົນ ໂດຍບໍ່ໃຫ້ສິ່ງຜົນກະທົບຕໍ່ບຸກຄົນ ແລະ ນັກທ່ອງທ່ຽວ ຢູ່ພາຍໃນເຂດປອດຄວັນຢາສູບ ທີ່ມີປ້າຍຫ້າມສູບຢາ ຢູ່ ຕາມສະຖານທີ່ຕ່າງໆ ທີ່ໄດ້ກຳນົດໄວ້ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 12 ການຕິດຕັ້ງປ້າຍຫ້າມສູບຢາ

ປ້າຍຫ້າມສູບຢາ ຕ້ອງພິມຂໍ້ຄວາມເປັນພາສາລາວ ແລະ ພາສາອັງກິດ ທີ່ຊັດເຈນ, ມີສັນຍາລັກຫ້າມສູບຢາ ທີ່ສາກົນຮັບຮູ້ ແລະ ນຳໃຊ້, ການຕິດຕັ້ງປ້າຍຫ້າມສູບຢາ ຕ້ອງຕິດໄວ້ສະຖານທີ່ເປີດເຜີຍ, ມອງເຫັນງ່າຍ, ຊັດເຈນ ໂດຍສະເພາະ ຢູ່ບໍລິເວນປະຕູເຂົ້າ-ອອກ, ຫ້ອງຮັບຕ້ອນ, ຫ້ອງນອນ, ຫ້ອງນ້ຳ, ຫ້ອງຮັບແຂກ, ຫ້ອງອາຫານ, ຫ້ອງບັນເທີງ, ນ້ອງນັ່ງຫຼິ້ນ ແລະ ຕາມຈຸດສຳຄັນຕ່າງໆ ຂອງອານາເຂດປອດຄວັນຢາສູບ ແລະ ສະຖານທີ່ຫ້າມສູບຢາ ຫຼື ເຂດປອດຄວັນຢາສູບ.

ໃນກໍລະນີຈຳເປັນ ສຳລັບສະຖານທີ່ອະນຸຍາດສູບຢາ ຫຼື ເຂດກຳຈັດຄວັນຢາສູບ ຕ້ອງມີປ້າຍ ທີ່ມີເນື້ອໃນບົ່ງບອກເຖິງໄລຍະຂອບເຂດກຳຈັດຄວັນຢາສູບ ໂດຍມີຮູບລູກສອນຊີ້ບອກທາງ, ພິມຂໍ້ຄວາມເປັນພາສາລາວ ແລະ ພາສາອັງກິດ ທີ່ຊັດເຈນ ຕິດໄວ້ບໍລິເວນ ເຂດກຳຈັດຄວັນຢາສູບ.

### ມາດຕາ 13 ການແນະນຳແຈ້ງເຕືອນການສູບຢາ

ນັກທ່ອງທ່ຽວ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດຳເນີນວຽກງານການທ່ອງທ່ຽວ ຢູ່ ສປປ ລາວ ລ້ວນແລ້ວແຕ່ມີໜ້າທີ່ໃຫ້ຂໍ້ມູນຂ່າວສານ, ແນະນຳ, ແຈ້ງເຕືອນ ແລະ ໂຄສະນາເຜີຍແຜ່ເຖິງຜົນຮ້າຍທີ່ເປັນອັນຕະລາຍຕໍ່ສຸຂະພາບຮ່າງກາຍ, ຕ້ານ, ສະກັດກັ້ນ ແລະ ກຳຈັດຢາສູບ ແລະ ການສູບຢາ ໃນຂະແໜງການທ່ອງທ່ຽວ ໃຫ້ກາຍເປັນການທ່ອງທ່ຽວສະອາດ, ປອດຄວັນຢາສູບ, ຂຽວ, ມີຄວາມຍືນຍົງ, ເປັນມິດກັບສິ່ງແວດລ້ອມ ໂດຍການເຄົາລົບ ແລະ ປະຕິບັດຕາມລະບຽບ, ກົດໝາຍ, ປ້າຍຫ້າມສູບຢາ ແລະ ມາດຕະການທາງລະບຽບ ກົດໝາຍ ທີ່ກ່ຽວຂ້ອງ.

## ໝວດທີ 3
## ພັນທະຂອງບຸກຄົນ, ການຈັດຕັ້ງ ແລະ ນັກທ່ອງທ່ຽວ

### ມາດຕາ 14 ພັນທະລວມ

ບຸກຄົນ, ການຈັດຕັ້ງ ແລະ ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ທີ່ມີສ່ວນກ່ຽວພັນກັບວຽກງານການທ່ອງທ່ຽວ ຢູ່ ສປປ ລາວ ລ້ວນແຕ່ມີພັນທະຕໍ່ວຽກງານການທ່ອງທ່ຽວ ປອດຄວັນຢາສູບ ຢູ່ ສປປ ລາວ ດັ່ງນີ້:

1. ໂຄສະນາເຜີຍແຜ່, ໃຫ້ຂໍ້ມູນຂ່າວສານ ເຖິງຜົນຮ້າຍຂອງຄວັນຢາສູບ ແລະການສູບຢາ, ຕ້ານການສູບຢາ ໃນສະຖານທີ່ທ່ອງທ່ຽວ ປອດຄວັນຢາສູບ ແລະ ການສູບຢາ;

2. ປົກປັກຮັກສາສິ່ງແວດລ້ອມ ດ້ານການທ່ອງທ່ຽວ ໃຫ້ກາຍເປັນການທ່ອງທ່ຽວສະອາດ, ສີຂຽວ, ມີຄວາມຍືນຍົງ ແລະ ປອດຄວັນຢາສູບ ແລະ ການສູບຢາ ໃນທຸກຂົງເຂດວຽກງານ ທີ່ຕິດພັນກັບການທ່ອງທ່ຽວປອດຄວັນຢາສູບ ໃນຂອບເຂດທົ່ວປະເທດ;
3. ຈຳກັດ ແລະ ກຳຈັດ ຄວັນຢາສູບ ແລະ ການສູບຢາ, ສິ່ງເສດເຫຼືອຈາກການເສບ, ການເຜົາໄໝ້ຢາສູບ ແລະ ການສູບຢາ ທຸກຊະນິດ;
4. ເຄົາລົບ ປະຕິບັດກົດໝາຍ, ລະບຽບການ, ຂໍ້ຫ້າມ ຫຼື ປ້າຍຫ້າມສູບຢາ ຢູ່ ຕາມສະຖານທີ່ຕ່າງໆ ຂອງການທ່ອງທ່ຽວ ປອດຄວັນຢາ ໃນຂອບເຂດທົ່ວປະເທດ;
5. ຈຳກັດ ແລະ ກຳຈັດການຜະລິດ, ການຈຳໜ່າຍ, ການຊື້-ຂາຍ, ການເສບ ແລະ ການສູບຢາທຸກຊະນິດ, ທຸກປະເພດ ແລະ ທຸກຮູບແບບ ໃນຂອບເຂດບໍລິເວນການທ່ອງທ່ຽວ ປອດຄວັນຢາສູບ;
6. ປະຕິບັດພັນທະອື່ນໆ ທີ່ກົດໝາຍບໍ່ເກືອດຫ້າມ ແລະ ກະທຳໃນສິ່ງທີ່ເປັນປະໂຫຍດຕໍ່ການຊຸກຍູ້ສົ່ງເສີມວຽກງານການທ່ອງທ່ຽວ ປອດຄວັນຢາສູບ.

**ມາດຕາ 15 ພັນທະຂອງການຈັດຕັ້ງ**

ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ນັບທັງພາກລັດ ແລະ ພາກທຸລະກິດ, ຫົວໜ່ວຍທຸລະກິດຜູ້ປະກອບການດ້ານການທ່ອງທ່ຽວທີ່ມີສ່ວນກ່ຽວພັນກັບວຽກງານການທ່ອງທ່ຽວ ຢູ່ ສປປ ລາວ ນອກຈາກປະຕິບັດພັນທະລວມດັ່ງກ່າວໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຍັງມີພັນທະຕໍ່ວຽກງານການທ່ອງທ່ຽວ ປອດຄວັນຢາສູບ ດັ່ງນີ້:

1. ກົມກອງວິຊາສະເພາະຂະແໜງການທ່ອງທ່ຽວ ຕ້ອງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງໜ່ວຍງານສະເພາະ ຕິດຕາມ ກວດກາ ແລະ ຄວບຄຸມຢາສູບ ແລະ ການສູບຢາ ຢູ່ໃນຂົງເຂດການທ່ອງທ່ຽວປອດຄວັນຢາສູບ ເພື່ອເຄື່ອນໄຫວ ເຮັດໜ້າທີ່ ຈັດຕັ້ງປະຕິບັດ ການກຳນົດປ້າຍ, ອອກປ້າຍ ແລະ ຕິດຕັ້ງປ້າຍຫ້າມສູບຢາ, ກຳນົດເຂດປອດຄວັນຢາສູບໃນຂົງເຂດການທ່ອງທ່ຽວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ນັບທັງສາຍຕັ້ງ ແລະ ສາຍຂວາງ ທີ່ຕົນຂຶ້ນກັບ;
2. ປຸກລະດົມ ຂົນຂວາຍ, ໃຫ້ຂໍ້ມູນ, ອະທິບາຍຊີ້ແຈ້ງຕໍ່ທຸກຊັ້ນຄົນ ທີ່ກ່ຽວພັນກັບວຽກງານການທ່ອງທ່ຽວຜູ້ທີ່ມີຄວາມສົນໃຈ ໃຫ້ເຂົ້າໃຈຢ່າງຖືກຕ້ອງ, ຮັບຮູ້ເຖິງຜົນຮ້າຍຂອງຢາສູບ ແລະ ການສູບຢາ, ເຂົ້າຮ່ວມການຈັດຕັ້ງ, ການເຄື່ອນໄຫວ ກິດຈະກຳການຄວບຄຸມ, ການຈຳກັດ, ກຳຈັດຢາສູບ ແລະ ການສູບຢາ ໃນຂົງເຂດການທ່ອງທ່ຽວ ປອດຄວັນຢາສູບໃຫ້ຫຼຸດໜ້ອຍຖອຍລົງ ແລະ ໝົດໄປຈາກສັງຄົມໃນຂົງເຂດການທ່ອງທ່ຽວ ຢູ່ ສປປ ລາວ;
3. ເຂົ້າຮ່ວມຂະບວນການຄວບຄຸມ, ຄຸ້ມຄອງ, ຕິດຕາມກວດກາ, ການບຳບັດ, ກຳຈັດຢາສູບ ແລະ ການສູບຢາ ໃນຂົງເຂດການທ່ອງທ່ຽວ ປອດຄວັນຢາສູບ ໃນຂອບເຂດທົ່ວປະເທດ ຢ່າງເໝາະສົມ ເປັນປະຈຳ;
4. ສ້າງຂະບວນການ, ການແຂ່ງຂັນ ແລະ ຈັດກິດຈະກຳການທ່ອງທ່ຽວ ປອດຄວັນຢາສູບ ເຂົ້າໃນກິດຈະກຳການທ່ອງທ່ຽວໃນຮູບແບບຕ່າງໆ, ຈັດເທສະການ, ນິທັດສະການ, ງານບຸນປະເພນີປະຈຳຊາດ, ປະຈຳທ້ອງຖິ່ນ, ງານວາງສະແດງ ແລະ ກອງປະຊຸມຕ່າງໆ ທັງໃນລະດັບຊາດ, ລະດັບທ້ອງຖິ່ນ, ລະດັບພາກພື້ນ, ລະດັບສາກົນ ແລະ ການຈັດງານສ້າງສັນຕ່າງໆ ທີ່ຕິດພັນກັບການທ່ອງທ່ຽວ ເພື່ອປຸກລະດົມມວນຊົນເຂົ້າຮ່ວມ ແລະ ເຫັນຄວາມສຳຄັນຕໍ່ວຽກງານການທ່ອງທ່ຽວ ປອດຄວັນຢາສູບ ຢູ່ ສປປ ລາວ;
5. ປະຕິບັດພັນທະອື່ນໆ ທີ່ກົດໝາຍບໍ່ເກືອດຫ້າມ ແລະ ກະທຳໃນສິ່ງທີ່ເປັນປະໂຫຍດຕໍ່ການຊຸກຍູ້ສົ່ງເສີມວຽກງານການທ່ອງທ່ຽວ ປອດຄວັນຢາສູບ.

**ມາດຕາ 16 ພັນທະຂອງບຸກຄົນ ແລະ ນັກທ່ອງທ່ຽວ**

ບຸກຄົນ, ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ທີ່ມີສ່ວນກ່ຽວພັນກັບການທ່ອງທ່ຽວ ຢູ່ ສປປ ລາວ ນອກຈາກປະຕິບັດພັນທະລວມ ດັ່ງກ່າວໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຍັງມີພັນທະຕໍ່ວຽກງານການທ່ອງທ່ຽວ ປອດຄວັນຢາສູບ ດັ່ງນີ້:

1. ບໍ່ສູບຢາໃນສະຖານທີ່ທ່ອງທ່ຽວ ປອດຄວັນຢາສູບ;
2. ບໍ່ຖິ້ມສິ່ງເສດເຫຼືອ ຫຼື ຂີ້ເຫຍື້ອທີ່ເກີດຈາກຢາສູບ ແລະ ສິ່ງເສດເຫຼືອທີ່ເກີດຈາກການເຜົາໄໝ້ຂອງການສູບຢາ;
3. ປະຕິບັດກົດໝາຍ, ລະບຽບການ, ປ້າຍຫ້າມສູບຢາ ແລະ ເຄົາລົບສິດທິຂອງບຸກຄົນ ແລະ ນັກທ່ອງທ່ຽວທີ່ ບໍ່ສູບຢາ.

## ໝວດທີ 4
## ຂໍ້ຫ້າມຂອງບຸກຄົນ, ການຈັດຕັ້ງ ແລະ ນັກທ່ອງທ່ຽວ

### ມາດຕາ 17 ຂໍ້ຫ້າມລວມ

ຂໍ້ຫ້າມ ສໍາລັບບຸກຄົນ, ການຈັດຕັ້ງ, ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ທີ່ມີສ່ວນກ່ຽວພັນກັບວຽກງານການທ່ອງທ່ຽວ ປອດຄວັນຢາສູບ ຢູ່ ສປປ ລາວ ມີດັ່ງນີ້:

1. ຜະລິດ, ຈໍາໜ່າຍ, ຊື້-ຂາຍ, ເສບ ສູບຢາ ຢູ່ ໃນເຂດການທ່ອງທ່ຽວ ປອດຄວັນຢາສູບ;
2. ປຸກລະດົມ, ຂົ່ມຂວາຍ, ຊຸກຍູ້ສົ່ງເສີມ, ໂຄສະນາເຜີຍແຜ່, ຊີ້ນໍາ, ຊັກຈູງ ແລະ ມີພຶດຕິກໍາໄປໃນທາງຍຸຍົງສົ່ງເສີມ ການເສບ ຫຼື ການສູບຢາ ທຸກຮູບແບບ ຢູ່ ໃນຂົງເຂດການທ່ອງທ່ຽວ ປອດຄວັນຢາສູບ;
3. ໃຫ້ສິນບົນ, ບັງຄັບນາບຂູ່, ຂັດຂວາງ ແລະ ມີພຶດຕິກໍາອື່ນໆ ທີ່ມີລັກສະນະບັງຄັບຂົ່ມຂູ່ ບຸກຄົນ, ການຈັດຕັ້ງ, ນັກທ່ອງທ່ຽວ ເຈົ້າໜ້າທີ່, ພະນັກງານ ຫຼື ຜູ້ທີ່ມີສ່ວນກ່ຽວຂ້ອງກັບການຈໍາກັດ, ກໍາຈັດຢາສູບ, ຄວບຄຸມ, ຕິດຕາມກວດກາ ຢາສູບ ແລະ ການສູບຢາ ຢູ່ ໃນຂົງເຂດການທ່ອງທ່ຽວ ປອດຄວັນຢາສູບ;
4. ນໍາໃຊ້ບຸກຄົນ ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດຕາມກົດໝາຍ ກະທໍາໃນສິ່ງທີ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງເກືອດຫ້າມ ກ່ຽວກັບຜະລິດຕະພັນຢາສູບ ແລະ ການຄວບຄຸມຢາສູບ ຢູ່ ໃນຂົງເຂດການທ່ອງທ່ຽວ ປອດຄວັນຢາສູບ;
5. ມີພຶດຕິກໍາອື່ນໆ ທີ່ຂັດຕໍ່ກົດໝາຍທີ່ກ່ຽວຂອງ ສປປ ລາວ ແລະ ຂໍ້ຕົກລົງສະບັບນີ້.

### ມາດຕາ 18 ຂໍ້ຫ້າມຂອງການຈັດຕັ້ງ

ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ນັບທັງພາກລັດ ແລະ ພາກທຸລະກິດ, ຫົວໜ່ວຍທຸລະກິດຜູ້ປະກອບການດ້ານການທ່ອງທ່ຽວ ທີ່ມີສ່ວນກ່ຽວພັນກັບວຽກງານການທ່ອງທ່ຽວ ຢູ່ ສປປ ລາວ ນອກຈາກປະຕິບັດຂໍ້ຫ້າມລວມ ດັ່ງກ່າວໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຕ້ອງປະຕິບັດຕາມຂໍ້ຫ້າມສະເພາະ ດັ່ງນີ້:

1. ສວຍໃຊ້ອໍານາດໜ້າທີ່ ຮຽກຮ້ອງຜົນປະໂຫຍດ, ສົມຮູ້ຮ່ວມຄິດ ຜູ້ຜະລິດ, ຈໍາໜ່າຍ, ຊື້-ຂາຍ, ເສບ-ສູບຢາ ຢູ່ ໃນຂົງເຂດການທ່ອງທ່ຽວ ປອດຄວັນຢາສູບ ໃນຂອບເຂດທົ່ວປະເທດ;
2. ນໍາໃຊ້ສໍານັກງານ, ຫ້ອງການ, ສະຖານທີ່ ເອື້ອອໍານວຍ ຫຼື ເປັນບ່ອນເກັບ, ກັກ, ຊຸກເຊື່ອງ, ຜະລິດ, ຈໍາໜ່າຍ, ຊື້-ຂາຍ, ແລກປ່ຽນ, ມອບ, ໂອນ, ເສບ-ສູບຢາ, ຜະລິດຕະພັນຢາສູບ ແລະ ອື່ນໆ
3. ປ່ອຍປະລະເລີຍການປະຕິບັດສິດ, ພັນທະ ແລະ ໜ້າທີ່ ໃນການຕິດຕາມ ກວດກາການຄວບຄຸມຢາສູບ ໃນຂົງເຂດການທ່ອງທ່ຽວ ປອດຄວັນຢາສູບ;
4. ມີພຶດຕິກໍາອື່ນໆ ທີ່ຂັດຕໍ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການຄວບຄຸມຢາສູບ ແລະ ການສູບຢາ ໃນຂົງເຂດການທ່ອງທ່ຽວ ປອດຄວັນຢາສູບ.

### ມາດຕາ 19 ຂໍ້ຫ້າມຂອງບຸກຄົນ ແລະ ນັກທ່ອງທ່ຽວ

ບຸກຄົນ ແລະ ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ທີ່ມີສ່ວນກ່ຽວພັນກັບວຽກງານການທ່ອງທ່ຽວ ຢູ່ ສປປ ລາວ ນອກຈາກປະຕິບັດຂໍ້ຫ້າມລວມ ດັ່ງກ່າວໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຕ້ອງປະຕິບັດຕາມຂໍ້ຫ້າມສະເພາະ ດັ່ງນີ້:

1. ສູບຢາ ໃນເຂດການທ່ອງທ່ຽວ ປອດຄວັນຢາສູບ;
2. ຕໍ່ຕ້ານ, ຂັດຂວາງ, ຝ່າຝືນຄຳແນະນຳ, ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ແລະ ພະນັກງານຮັບຜິດຊອບຕໍ່ວຽກງານການທ່ອງທ່ຽວ ປອດຄວັນຢາສູບ ໃນການຕິດຕາມກວດກາ ແລະ ການນຳໃຊ້ມາດຕະການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ບໍ່ຈ່າຍຄ່າບໍລິການຫ້ອງສູບຢາ ທີ່ຕົນເອງເຂົ້າໃຊ້ບໍລິການ ຢູ່ ຕາມຈຸດບໍລິການຫ້ອງສູບຢາ ໃນຂົງເຂດການທ່ອງທ່ຽວ;
4. ມີພຶດຕິກຳຂັດຕໍ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການຄວບຄຸມຢາສູບ ແລະ ການສູບຢາ ໃນຂົງເຂດການທ່ອງທ່ຽວ ປອດຄວັນຢາສູບ.

## ໝວດທີ 5
## ການແກ້ໄຂຂໍ້ຂັດແຍ່ງຂອງວຽກງານ ການທ່ອງທ່ຽວ ປອດຄວັນຢາສູບ

**ມາດຕາ 20 ການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ສາມາດດຳເນີນໄດ້ດ້ວຍຮູບການໃດໜຶ່ງ ດັ່ງນີ້:
1. ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການແກ້ໄຂໂດຍສານປະຊາຊົນ;

**ມາດຕາ 21 ການປະນີປະນອມ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ກ່ຽວກັບການເຄື່ອນໄຫວ ການຄວບຄຸມຢາສູບ ຢູ່ ໃນຂົງເຂດວຽກງານການທ່ອງທ່ຽວ ຄູ່ກໍລະນີຕ້ອງປຶກສາຫາລືຫາທາງອອກຮ່ວມກັນ ຢ່າງສັນຕິວິທີ ດ້ວຍການປະນີປະນອມກັນ ແລະ ພ້ອມກັນສະໝັກໃຈແກ້ໄຂບັນຫາຢ່າງສົມເຫດສົມຜົນ.

**ມາດຕາ 22 ການແກ້ໄຂທາງດ້ານບໍລິຫານ**

ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນ ແລະ ບໍ່ສາມາດແກ້ໄຂດ້ວຍການປະນີປະນອມກັນໄດ້ ຄູ່ກໍລະນີ ສາມາດສະເໜີບັນຫາຕໍ່ຂະແໜງການທ່ອງທ່ຽວທີ່ກ່ຽວຂ້ອງບ່ອນທີ່ຕົນຂຶ້ນກັບ ເພື່ອເປັນໃຈກາງໃນການຄົ້ນຄວ້າປຶກສາຫາລື ຫາທາງອອກ ແລະ ພິຈາລະນາແກ້ໄຂຮ່ວມກັນ ໂດຍການເຊື້ອເຊີນລະຫວ່າງຄູ່ກໍລະນີ ເພື່ອແຈ້ງ ແລະ ສອບຖາມບັນຫາ, ເຫດຜົນ ແລະ ຂໍ້ມູນທີ່ເປັນຈິງຂອງທັງສອງຝ່າຍ ແລະ ຊ່ວຍຫາວິທີທາງອອກທີ່ດີ ມີຄວາມຍຸຕິທຳຕໍ່ທຸກຝ່າຍ ພ້ອມທັງສ້າງຄວາມເຂົ້າໃຈທີ່ຖືກຕ້ອງ ສອດຄ່ອງກັບຄວາມເປັນຈິງ ໂດຍອີງໃສ່ຂໍ້ເທັດຈິງທີ່ເກີດຂຶ້ນ ແລະ ຖືເອົາລະບຽບການທາງບໍລິຫານ ທີ່ສອດຄ່ອງກັບກົດໝາຍ ເປັນຫຼັກເກນໃນການຕັດສິນບັນຫາຢ່າງກົງໄປກົງມາ ພ້ອມທັງເຮັດບົດບັນທຶກ ແລະ ລົງລາຍເຊັນ ໂດຍຄູ່ກໍລະນີ ພ້ອມຄະນະ ໄວ້ເປັນຫຼັກຖານໃນການຈັດຕັ້ງປະຕິບັດ.

ໃນກໍລະນີ ຄູ່ກໍລະນີ ບໍ່ສາມາດຕົກລົງກັນໄດ້, ການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງລົງບັນທຶກໄວ້ເປັນຫຼັກຖານພ້ອມລົງລາຍເຊັນຂອງຄູ່ກໍລະນີ ແລະ ໃຫ້ເວລາຄູ່ກໍລະນີທັງສອງຝ່າຍ ກັບໄປຄົ້ນຄິດພິຈາລະນາພາຍໃນ 3 ວັນລັດຖະການ, ຖ້າຫາກ ຍັງບໍ່ສາມາດຕົກລົງກັນໄດ້ ການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງແຈ້ງໃຫ້ຄູ່ກໍລະນີຮັບຊາບ ແລະ ນຳສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອດຳເນີນການໃນຂັ້ນຕໍ່ໄປ.

**ມາດຕາ 23 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີເກີດຂໍ້ຂັດແຍ່ງ ໃນການເຄື່ອນໄຫວວຽກງານການຄວບຄຸມຢາສູບ ຢູ່ ໃນຂົງເຂດການທ່ອງທ່ຽວ ທີ່ບໍ່ສາມາດແກ້ໄຂທາງບໍລິຫານໄດ້ ຄູ່ກໍລະນີ ມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະ

ມາແກ້ໄຂຕາມຂະບວນການຂອງ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີ ຄູ່ກໍລະນີ ບໍ່ສາມາດຕົກລົງກັນໄດ້, ການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງລົງບັນທຶກໄວ້ເປັນຫຼັກຖານ ພ້ອມລົງລາຍເຊັນຄູ່ກໍລະນີ ແລະ ໃຫ້ເວລາຄູ່ກໍລະນີທັງສອງຝ່າຍ ກັບໄປຄົ້ນຄິດພິຈາລະນາ ພາຍໃນ 2 ວັນລັດຖະການ, ຖ້າຫາກຍັງບໍ່ສາມາດຕົກລົງກັນໄດ້ ການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງແຈ້ງໃຫ້ຄູ່ກໍລະນີຮັບຊາບ ແລະ ນຳສະເໜີຕໍ່ອົງການໄອຍະການ ແລະ ສານປະຊາຊົນ ເພື່ອດຳເນີນການໃນຂັ້ນຕໍ່ໄປ.

**ມາດຕາ 24 ການຮ້ອງຟ້ອງຕໍ່ສານປະຊາຊົນ**

ເມື່ອຄູ່ກໍລະນີບໍ່ສາມາດແກ້ໄຂຂໍ້ຂັດແຍ່ງທາງບໍລິຫານ ແລະ ການໄກ່ເກ່ຍໄດ້ ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອດຳເນີນການ ຕາມຂະບວນການຍຸຕິທຳ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 6
## ການເກັບຄ່າບໍລິການ ແລະ ການປັບໃໝ

**ມາດຕາ 25 ຄ່າປັບໃໝ ແລະ ຄ່າບໍລິການຫ້ອງສູບຢາ**

ບຸກຄົນ, ນິຕິບຸກຄົນ, ນັກທ່ອງທ່ຽວ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດ ຫຼື ນຳໃຊ້ບໍລິການຫ້ອງສູບຢາ ຢູ່ໃນຂົງເຂດການທ່ອງທ່ຽວ ທີ່ຂະແໜງການກ່ຽວຂ້ອງຈັດສັນໃຫ້ ຕ້ອງໄດ້ເສຍຄ່າບໍລິການ ຕໍ່າສຸດ ຫ້າສິບພັນກີບ ຕໍ່ ໜຶ່ງຄັ້ງ ຕໍ່ໜຶ່ງຄົນ.

ສຳລັບຄ່າປັບໃໝ ຂໍ້ຫາລະເມີດຂໍ້ກຳນົດ ກົດໝາຍ, ປ້າຍຫ້າມ, ຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງໃຫ້ປັບໃໝຕາມມູນຄ່າຄວາມເສຍຫາຍທີ່ເກີດຂຶ້ນ (ການປັບໃໝ ຕໍ່າສຸດ ຫ້າສິບພັນກີບ ຕໍ່ ໜຶ່ງຄັ້ງ ຕໍ່ ໜຶ່ງຄົນ ແລະ ຕໍ່ ໜຶ່ງກໍລະນີ).

**ມາດຕາ 26 ການເກັບຄ່າປັບໃໝ ແລະ ຄ່າບໍລິການຫ້ອງສູບຢາ**

ພະນັກງານ ຫຼື ເຈົ້າໜ້າທີ່ເກັບຄ່າປັບໃໝ ແລະ ຄ່າບໍລິການຫ້ອງສູບຢາ ຕ້ອງໄດ້ຮັບອະນຸຍາດຈາກການຈັດຕັ້ງທີ່ກ່ຽວຂ້ອງ ໃນການເກັບຄ່າປັບໃໝ ແລະ ຄ່າບໍລິການຫ້ອງສູບຢາ ໂດຍຈົດຮັບ-ຈົດຈ່າຍ ຢ່າງຖືກຕ້ອງ ພ້ອມທັງອອກໃບເກັບເງິນທີ່ຖືກຕ້ອງຕາມລະບຽບການຂອງໜ່ວຍງານຄວບຄຸມຢາສູບ ໃນຂະແໜງການທ່ອງທ່ຽວ.

ລາຍຮັບທັງໝົດທີ່ເກັບໄດ້ຈາກຄ່າປັບໃໝ ແລະ ຄ່າບໍລິການຫ້ອງສູບຢາ ແມ່ນມອບໃຫ້ເປັນກອງທຶນບໍລິຫານວຽກການຄວບຄຸມຢາສູບ ໃນຂະແໜງການທ່ອງທ່ຽວ ສປປ ລາວ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາວຽກງານ ການທ່ອງທ່ຽວ ປອດຄວັນຢາສູບ

**ມາດຕາ 27 ການຄຸ້ມຄອງ ແລະ ການກວດກາ**

ການຄຸ້ມຄອງ ແລະ ກວດກາວຽກງານ ການທ່ອງທ່ຽວ ປອດຄວັນຢາສູບ ມອບໃຫ້ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບກົມວິຊາການທີ່ກ່ຽວຂ້ອງ, ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ກວດກາວຽກງານ ການທ່ອງທ່ຽວ ປອດຄວັນຢາສູບ ແລະ ເປັນເອກະພາບທົ່ວປະເທດ ທັງເປັນເຈົ້າການປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ຄວາມສະຫງົບ ແລະ ຄວາມປອດໄພຢ່າງຮອບດ້ານ.

**ມາດຕາ 28 ອົງການຄຸ້ມຄອງວຽກງານ ການທ່ອງທ່ຽວ ປອດຄວັນຢາສູບ**

ອົງການຄຸ້ມຄອງວຽກງານ ການທ່ອງທ່ຽວ ປອດຄວັນຢາສູບ ປະກອບດ້ວຍ:

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;
2. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ;
3. ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງກະຊວງຖະແຫຼງຂ່າວ, ວັດທະນະທາ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານ ການທ່ອງທ່ຽວ ປອດຄວັນຢາສູບ ນອກຈາກສິດ ແລະ ໜ້າທີ່ ຕາມກົດໝາຍແລ້ວ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຍັງມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າລະບຽບ, ນະໂຍບາຍ, ແຜນຍຸດທະສາດ, ກຳນົດເງື່ອນໄຂ, ມາດຕະຖານ ແລະ ມາດຕະການ ກ່ຽວກັບ ການທ່ອງທ່ຽວ ປອດຄວັນຢາສູບ ທົ່ວປະເທດ;
2. ຜັນຂະຫຍາຍແນວທາງນະໂຍບາຍ ແລະ ກົດໝາຍ ແລະ ລະບຽບການຂອງລັດ ກ່ຽວກັບວຽກງານ ການທ່ອງທ່ຽວ ປອດຄວັນຢາສູບ, ສ້າງແຜນການ, ແຜນງານ, ໂຄງການ ແລະ ການຈັດຕັ້ງປະຕິບັດ ຕິດພັນກັບການປ້ອງກັນຄວາມສະຫງົບ ແລະ ຄວາມປອດໄພຢ່າງຮອບດ້ານ;
3. ໂຄສະນາສຶກສາອົບຮົມນະໂຍບາຍ, ກົດໝາຍ, ລະບຽບການ, ແຜນຍຸດທະສາດ, ແຜນການ, ໂຄງການ ກ່ຽວກັບວຽກງານ ການທ່ອງທ່ຽວ ປອດຄວັນຢາສູບ;
4. ຄົ້ນຄວ້າ, ເຜີຍແຜ່, ແນະນຳວຽກງານ ການທ່ອງທ່ຽວ ປອດຄວັນຢາສູບ ໃຫ້ດຳເນີນໄປຢ່າງມີປະສິດທິພາບ, ມີປະສິດທິຜົນ, ຕິດພັນກັບວຽກງານໂຄສະນາເຜີຍແຜ່ການຄວບຄຸມຢາສູບ ໃນຂະແໜງການທ່ອງທ່ຽວ;
5. ປະສານສົມທົບກັບກະຊວງສາທາລະນະສຸກ, ກະຊວງປ້ອງກັນຄວາມສະຫງົບ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຕິດຕາມ ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດ ດ້ານການທ່ອງທ່ຽວ ກ່ຽວກັບການຄວບຄຸມຢາສູບ ຢູ່ໃນແຕ່ລະຫົວໜ່ວຍທຸລະກິດການທ່ອງທ່ຽວ ໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ຄວາມສະຫງົບ ແລະ ຄວາມປອດໄພ ຕິດພັນກັບການຕ້ານ, ການສະ ກັດກັ້ນ, ການຈຳກັດ ແລະ ການກຳຈັດຄວັນຢາສູບ ແລະ ການສູບຢາຢູ່ໃນຂົງເຂດການທ່ອງທ່ຽວ;
6. ຝຶກອົບຮົມ, ຍົກລະດັບປັບປຸງຄວາມຮູ້ຄວາມສາມາດຂອງບຸກຄະລາກອນໃນຂົງເຂດການທ່ອງທ່ຽວ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນໃຫ້ມີທັກສະ, ມີຄວາມຮູ້ ແລະ ຄວາມສາມາດໃນແຕ່ລະດ້ານ ກ່ຽວກັບການຄວບຄຸມຢາສູບໃນຂະແໜງການທ່ອງທ່ຽວ ໃຫ້ມີຄຸນນະພາບ ແລະ ມາດຕະຖານຄວາມປອດໄພຕໍ່ສຸຂະພາບ;
7. ຊີ້ນຳນຳພາພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ ກ່ຽວກັບການຄວບຄຸມຢາສູບໃນຂະແໜງການທ່ອງທ່ຽວ ທົ່ວປະເທດ;
8. ຄົ້ນຄວ້າ, ພິຈາລະນາ ກ່ອນການອະນຸມັດການດຳເນີນທຸລະກິດດ້ານການທ່ອງທ່ຽວຂອງບັນດາຫົວໜ່ວຍທຸລະກິດ ເພື່ອວາງມາດຕະການຄວບຄຸມຢາສູບ ຢູ່ໃນຫົວໜ່ວຍທຸລະກິດ;
9. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າພິຈາລະນາ ການຕັກເຕືອນ, ການປັບໃໝ, ການໂຈະ, ການຍຸບເລີກຫົວໜ່ວຍທຸລະກິດບໍລິການ ດ້ານການທ່ອງທ່ຽວ ທີ່ລະເມີດຂໍ້ກຳນົດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການຄວບຄຸມຢາສູບ ໃນຂະແໜງການທ່ອງທ່ຽວ ທີ່ມີຜົນກະທົບຮ້າຍແຮງຕໍ່ຊີວິດ ແລະ ສຸຂະພາບຂອງບຸກຄົນ, ນັກທ່ອງທ່ຽວ ແລະ ເດັກນ້ອຍ;
10. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານການຄວບຄຸມຢາສູບ ໃນຂະແໜງການທ່ອງທ່ຽວ ທົ່ວປະເທດໃຫ້ລັດຖະບານ ເປັນປະຈຳ 6 ເດືອນ ແລະ ປະຈຳປີ;

11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບການຄວບຄຸມຢາສູບ ໃນຂະແໜງການທ່ອງທ່ຽວ.

### ມາດຕາ 30 ສິດ ແລະ ໜ້າທີ່ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ໃນການຄຸ້ມຄອງວຽກງານການທ່ອງທ່ຽວ ປອດຄວັນຢາສູບ ນອກຈາກສິດ ແລະ ໜ້າທີ່ ຕາມກົດໝາຍແລ້ວ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຍັງມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຈັດຕັ້ງປະຕິບັດຕາມແນວທາງນະໂຍບາຍ, ລະບຽບ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ໂຄງການ, ເງື່ອນໄຂ, ມາດຕະຖານ, ການພັດທະນາ ແລະ ການຄຸ້ມຄອງວຽກງານການທ່ອງທ່ຽວ ປອດຄວັນຢາສູບ ໃນຂອບເຂດແຂວງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
2. ຄົ້ນຄວ້າແຜນຍຸດທະສາດ, ແຜນການ, ໂຄງການ, ລະບຽບການ ກ່ຽວກັບການພັດທະນາ ແລະ ການຄຸ້ມຄອງ ວຽກງານການຄວບຄຸມຢາສູບ ໃນຂະແໜງການທ່ອງທ່ຽວ ທີ່ຂຶ້ນກັບຄວາມຮັບຜິດຊອບຂອບຕົນ;
3. ປະສານສົມທົບກັບຂະແໜງສາທາລະນະສຸກ, ຂະແໜງປ້ອງກັນຄວາມສະຫງົບ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວຕິດຕາມກວດກາວຽກງານການຄວບຄຸມຢາສູບ ແລະ ການສູບຢາ ໃນຂະແໜງການທ່ອງທ່ຽວ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ແລະ ກາຍເປັນການທ່ອງທ່ຽວ ປອດຄວັນຢາສູບ, ມີຄວາມສະຫງົບ ແລະ ຄວາມປອດໄພຢ່າງຮອບດ້ານ;
4. ຄົ້ນຄວ້າ, ພິຈາລະນາ, ອະນຸມັດ ການດໍາເນີນທຸລະກິດບໍລິການດ້ານການທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອວາງມາດຕະການກ່ຽວກັບການຄວບຄຸມຢາສູບ ໃນຂະແໜງການທ່ອງທ່ຽວ ໃຫ້ກາຍເປັນຫົວໜ່ວຍທຸລະກິດການທ່ອງທ່ຽວ ປອດຄວັນຢາສູບ;
5. ຄົ້ນຄວ້າ, ພິຈາລະນາການຕໍ່ໃບອະນຸຍາດ, ການຍ້ອງຍໍຊົມເຊີຍ, ການຕັກເຕືອນ, ການປັບໃໝ, ການໂຈະ, ການຍຸບເລີກການດໍາເນີນທຸລະກິດດ້ານການທ່ອງທ່ຽວ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເພື່ອວາງມາດຕະການກ່ຽວກັບການຄວບຄຸມຢາສູບໃນຂະແໜງການທ່ອງທ່ຽວໃຫ້ກາຍເປັນຫົວໜ່ວຍທຸລະກິດການທ່ອງທ່ຽວ ປອດຄວັນຢາສູບ;;
6. ເກັບກໍາສະຖິຕິ, ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານ, ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫົວໜ່ວຍທຸລະກິດດ້ານການທ່ອງທ່ຽວ ກ່ຽວກັບການຄວບຄຸມຢາສູບຢູ່ໃນຫົວໜ່ວຍທຸລະກິດທີ່ຢູ່ໃນຂອບເຂດແຂວງ, ນະຄອນຫຼວງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ຂັ້ນເທິງຂອງຕົນຊາບເປັນປະຈໍາ 3 ເດືອນ, 6 ເດືອນ ແລະ ປະຈໍາປີ;
7. ອໍານວຍຄວາມສະດວກ ແລະ ໃຫ້ການຮ່ວມມືທີ່ດີ ຕໍ່ການຈັດຕັ້ງ, ເຈົ້າໜ້າທີ່ກ່ຽວຂ້ອງ ແລະ ຂັ້ນເທິງຂອງຕົນ ໃນການຕິດຕາມກວດກາວຽກງານການຄວບຄຸມຢາສູບ ແລະ ການສູບຢາ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
8. ຝຶກອົບຮົມ, ຍົກລະດັບປັບປຸງຄວາມຮູ້ຄວາມສາມາດຂອງບຸກຄະລາກອນໃນຂົງເຂດການທ່ອງທ່ຽວ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນໃຫ້ມີທັກສະ, ມີຄວາມຮູ້, ຄວາມສາມາດໃນແຕ່ລະດ້ານກ່ຽວກັບການຄວບຄຸມຢາສູບ ແລະ ການສູບຢາ;
9. ຊີ້ນໍານໍາພາຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງ ກ່ຽວກັບວຽກງານການຄວບຄຸມຢາສູບ ແລະ ການສູບຢາ;
10. ນໍາໃຊ້ສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການບໍ່ເກືອດຫ້າມ.

### ມາດຕາ 31 ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ

ໃນການຄຸ້ມຄອງວຽກງານການຄວບຄຸມຢາສູບ ໃນຂະແໜງການທ່ອງທ່ຽວ ນອກຈາກສິດ ແລະ ໜ້າທີ່ ຕາມກົດໝາຍ ແລ້ວ ຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງ ຍັງມີສິດ ແລະ ໜ້າທີ່ ກ່ຽວກັບການຄວບຄຸມຢາສູບ ແລະ ການສູບຢາ ໃນຂະແໜງການທ່ອງທ່ຽວ ດັ່ງນີ້:

1. ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ຄຳສັ່ງ, ແຜນການ, ໂຄງການການພັດທະນາ, ການຄຸ້ມຄອງ ແລະ ມາດຕະຖານ ກ່ຽວກັບວຽກງານການຄວບຄຸມຢາສູບ ແລະ ການສູບຢາ ໃນຂອບເຂດທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
2. ຄົ້ນຄວ້າ, ສ້າງແຜນການ, ໂຄງການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານການຄວບຄຸມຢາສູບ ແລະ ການສູບຢາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ຄົ້ນຄວ້າ, ພິຈາລະນາ, ອະນຸມັດ ການດຳເນີນທຸລະກິດບໍລິການ ດ້ານການທ່ອງທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອວາງມາດຕະການຄວບຄຸມຢາສູບ ແລະ ການສູບຢາ ໃນຂະແໜງການທ່ອງທ່ຽວ;
4. ຄົ້ນຄວ້າ, ພິຈາລະນາການຕໍ່ໃບອະນຸຍາດ, ການຍ້ອງຍໍຊົມເຊີຍ, ການຕັກເຕືອນ, ການປັບໃໝ, ການໂຈະ ແລະ ການຍຸບເລີກຫົວໜ່ວຍທຸລະກິດ ດ້ານການທ່ອງທ່ຽວ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ທີ່ລະເມີດຂໍ້ກຳນົດ ກົດໝາຍ ແລະ ລະບຽບການກ່ຽວຂ້ອງກັບການຄວບຄຸມຢາສູບໃນຂະແໜງການທ່ອງທ່ຽວ ທີ່ສົ່ງຜົນຮ້າຍແຮງຕໍ່ຊີວິດ, ສຸຂະພາບຂອງບຸກຄົນ, ນັກທ່ອງທ່ຽວ ແລະ ເດັກນ້ອຍ ໃນຂົງເຂດການທ່ອງທ່ຽວ;
5. ປະສານສົມທົບກັບຫ້ອງການສາທາລະນະສຸກເມືອງ, ຫ້ອງການເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ, ຫ້ອງການປົກຄອງບ້ານ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວຕິດຕາມກວດກາວຽກງານການຄວບຄຸມຢາສູບ ແລະ ການສູບຢາ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ກາຍເປັນການທ່ອງທ່ຽວປອດຄວັນຢາສູບ, ມີຄວາມເປັນລະບຽບຮຽບຮ້ອຍ, ສະຫງົບ ແລະ ມີຄວາມປອດໄພ ຢ່າງຮອບດ້ານ;
6. ເກັບກຳສະຖິຕິ, ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານກ່ຽວກັບການຄວບຄຸມຢາສູບ ໃນຂະແໜງການທ່ອງທ່ຽວ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ຂັ້ນເທິງຂອງຕົນຊາບ ເປັນປະຈຳ 3 ເດືອນ, 6 ເດືອນ ແລະ ປະຈຳປີ;
7. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືເປັນຢ່າງດີ ຕໍ່ການຈັດຕັ້ງ, ເຈົ້າໜ້າທີ່ກ່ຽວຂ້ອງ ແລະ ຂັ້ນເທິງທີ່ຕົນຂຶ້ນກັບ ກ່ຽວກັບການຄຸ້ມຄອງ ຕິດຕາມກວດກາ ວຽກງານການຄວບຄຸມຢາສູບ ໃນຂະແໜງການທ່ອງທ່ຽວ;
8. ຝຶກອົບຮົມ, ຍົກລະດັບປັບປຸງຄວາມຮູ້ ຄວາມສາມາດ ຂອງບຸກຄະລາກອນ ໃນຂົງເຂດການທ່ອງທ່ຽວປອດຄວັນຢາສູບ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ມີທັກສະ, ມີຄວາມຮູ້, ຄວາມສາມາດ ໃນແຕ່ລະດ້ານ ກ່ຽວກັບ ວຽກງານການຄວບຄຸມຢາສູບໃນຂະແໜງການທ່ອງທ່ຽວ;
9. ນຳໃຊ້ສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມຢາສູບ ແລະ ການສູບຢາ.

**ມາດຕາ 32 ຄວາມຮັບຜິດຊອບຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານການຄວບຄຸມຢາສູບໃນຂະແໜງການທ່ອງທ່ຽວ ອົງການປົກຄອງບ້ານມີຄວາມຮັບຜິດຊອບ ດັ່ງນີ້:

1. ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ແຜນຍຸດທະສາດ, ແຜນການ ໂຄງການ, ກົດໝາຍ, ລະບຽບການ, ຄຳສັ່ງ, ການພັດທະນາ, ການຄຸ້ມຄອງ ແລະ ມາດຕະຖານ ກ່ຽວກັບວຽກງານການຄວບຄຸມຢາສູບໃນຂະແໜງການທ່ອງທ່ຽວ ພາຍໃນຂອບເຂດບ້ານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
2. ໃຫ້ການຮ່ວມມືທີ່ດີ ຕໍ່ກັບຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ຂະແໜງສາທາລະນະສຸກ, ຂະແໜງປ້ອງກັນຄວາມສະຫງົບ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງໃນການຄຸ້ມຄອງຕິດຕາມກວດກາວຽກງານການຄວບຄຸມຢາສູບ ໃນຂະແໜງການທ່ອງທ່ຽວ ພາຍໃນຂອບເຂດບ້ານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
3. ລາຍງານການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານການຄວບຄຸມຢາສູບ ພາຍໃນຂອບເຂດບ້ານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຊາບເປັນ

ປະຈຳ 3 ເດືອນ, 6 ເດືອນ ແລະ ປະຈຳປີ;

4. ນຳໃຊ້ສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວກັບຂ້ອງກັບການຄວບຄຸມຢາສູບ.

**ມາດຕາ 33 ຄວາມຮັບຜິດຊອບຂອງຂະແໜງການອື່ນ**

ຂະແໜງການອື່ນ ມີໜ້າທີ່ໃນການຈັດຕັ້ງປະຕິບັດ, ອຳນວຍຄວາມສະດວກ, ໃຫ້ການຮ່ວມມືທີ່ດີ ຕໍ່ການຄຸ້ມຄອງ ຕິດຕາມກວດກາການຄວບຄຸມຢາສູບ ແລະ ການສູບຢາ ໃນຂະແໜງການທ່ອງທ່ຽວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 34 ຮູບການກວດກາ**

ການກວດກາວຽກງານການທ່ອງທ່ຽວ ປອດຄວັນຢາສູບ ແລະ ການສູບຢາ ມີ 3 ຮູບການດັ່ງນີ້:

1. ການກວດກາຢ່າງປົກກະຕິ ແມ່ນການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮັບຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ແມ່ນການກວດກາຮີບດ່ວນໂດຍບໍ່ໄດ້ແຈ້ງໃຫ້ຫົວໜ່ວຍທຸລະກິດຮັບຊາບລ່ວງໜ້າ.

**ມາດຕາ 35 ເນື້ອໃນຂອງການກວດກາ**

ການກວດກາວຽກງານການທ່ອງທ່ຽວ ປອດຄວັນຢາສູບ ແລະ ການສູບຢາ ມີດັ່ງນີ້:

1. ກວດກາ ການປະຕິບັດກົດໝາຍ ແລະ ລະບຽບການ;
2. ກວດກາ ການດຳເນີນທຸລະກິດ ເປັນຕົ້ນ ການບໍລິການ, ການຈັດຕັ້ງປະຕິບັດມາດຕະຖານ ແລະ ການປະຕິບັດສິດ, ພັນທະ ແລະ ໜ້າທີ່ຂອງຫົວໜ່ວຍທຸລະກິດ ກ່ຽວການຄວບຄຸມຢາສູບ ແລະ ການສູບຢາພາຍໃນຫົວໜ່ວຍທຸລະກິດຂອງຕົນ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ກັບຜູ້ລະເມີດ

**ມາດຕາ 36 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ນັກທ່ອງທ່ຽວ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ຫຼື ດຳເນີນທຸລະກິດ ດ້ານການທ່ອງທ່ຽວ ຢູ່ ສປປ ລາວ ຢ່າງມີຄຸນນະພາບ, ສະຫງົບ, ປອດໄພ, ໄດ້ມາດຕະຖານ, ປອດຄວັນຢາສູບ ແລະ ການສູບຢາ ໃນຂົງເຂດການທ່ອງທ່ຽວ ຈະໄດ້ຮັບການຍ້ອງຍໍຊົມເຊີຍ ແລະ ນະໂຍບາຍ ໃນຮູບການຕ່າງໆຕາມຄວາມເໝາະສົມ.

**ມາດຕາ 37 ມາດຕະການຕໍ່ກັບຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ນັກທ່ອງທ່ຽວ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ດຳເນີນຄະດີຕາມກົດໝາຍ ແລ້ວແຕ່ກໍລະນີ ໜັກ ຫຼື ເບົາ.

**ມາດຕາ 38 ການສຶກສາອົບຮົມ ແລະ ກ່າວເຕືອນ**

ບຸກຄົນ, ນິຕິບຸກຄົນ, ນັກທ່ອງທ່ຽວ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ໃນກໍລະນີເປັນການກະທຳຜິດຄັ້ງທີໜຶ່ງ ແລະ ເປັນໂທດສະຖານເບົາ ທີ່ບໍ່ມີຄວາມເສຍຫາຍ ຫຼື ບາດເຈັບອັນຕະລາຍ ຈະຖືກສຶກສາອົບຮົມ, ກ່າວເຕືອນ ດ້ວຍຮູບການ ແລະ ວິທີການຕ່າງໆ ຕາມກົດໝາຍທີ່ກ່ຽວຂ້ອງ ໂດຍບໍ່ມີການລະ

ເວັ້ນ ຫຼື ຈຳແນກຊົນຊັ້ນ, ເຊື້ອຊາດ ພ້ອມທັງແຈ້ງເຫດຜົນ ແລະ ການກະທຳຜິດໃຫ້ຮັບຊາບ ແລະ ລົງບັນທຶກໄວ້ເປັນຫຼັກຖານ.

**ມາດຕາ 39 ການປັບໃໝ ແລະ ໃຊ້ແທນຄ່າເສຍຫາຍ**

ບຸກຄົນ, ນິຕິບຸກຄົນ, ນັກທ່ອງທ່ຽວ, ການຈັດຕັ້ງພາຍ ແລະ ຕ່າງປະເທດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ໃນກໍລະນີເກີດຄວາມເສຍຫາຍ ຫຼື ບາດເຈັບ ແລະ ຖືກນຳໃຊ້ມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 38 ຂອງຂໍ້ຕົກລົງສະບັບນີ້ ຜ່ານມາແລ້ວ ໃຫ້ປະຕິບັດດັ່ງນີ້:

ຄັ້ງທີໜຶ່ງ: ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝເປັນເງິນ ໃນຈຳນວນສູງສຸດບໍ່ເກີນ 500,000 ກີບ ພ້ອມທັງໃຊ້ແທນຄ່າເສຍຫາຍ ທັງໝົດທີ່ເກີດຂຶ້ນ ໃນກໍລະນີມີຄວາມເສຍຫາຍ ແລະ ລົງບັນທຶກໄວ້ເປັນຫຼັກຖານ.

ຄັ້ງທີສອງ: ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ປັບໃໝເປັນເງິນໃນຈຳນວນສູງສຸດບໍ່ເກີນ 1,000,000 ກີບ ພ້ອມທັງໃຊ້ແທນຄ່າເສຍຫາຍທັງໝົດທີ່ເກີດຂຶ້ນ ໃນກໍລະນີມີຄວາມເສຍຫາຍ ແລະ ລົງບັນທຶກໄວ້ເປັນຫຼັກຖານ.

ຄັ້ງທີສາມ: ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝເປັນເງິນໃນຈຳນວນສູງສຸດບໍ່ເກີນ 2,000,000 ກີບ ແລະ ໃຊ້ແທນຄ່າເສຍຫາຍທັງໝົດທີ່ເກີດຂຶ້ນ ໃນກໍລະນີມີຄວາມເສຍຫາຍ.

ຈຳນວນເງິນປັບໃໝທັງໝົດ ຕ້ອງມອບເຂົ້າບັນຊີ ຫຼື ກອງທຶນບໍລິຫານອຸທະຍານ ການທ່ອງທ່ຽວ ປອດຄວັນຢາສູບ ສປປ ລາວ ຕາມລະບຽບການ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 40 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຄຸ້ມຄອງການທ່ອງທ່ຽວ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບກົມກອງວິຊາການທີ່ກ່ຽວຂ້ອງ, ສຳນັກງານ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ນັບແຕ່ສູນກາງ ລົງຮອດທ້ອງຖິ່ນ ຈັດຕັ້ງໂຄສະນາເຜີຍແຜ່ ຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິພາບ, ປະສິດທິຜົນ ຢ່າງກວ້າງຂວາງ ແລະ ທົ່ວເຖິງ ໃນຂອບເຂດທົ່ວປະເທດ.

ກົມກອງ, ສຳນັກງານ, ອົງການ, ອົງການປົກຄອງທ້ອງຖິ່ນ, ບຸກຄົນ, ນິຕິບຸກຄົນ, ນັກທ່ອງທ່ຽວ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ຫຼື ດຳເນີນທຸລະກິດ ດ້ານການທ່ອງທ່ຽວ ຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 41 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ, ຂໍ້ກຳນົດ, ກົດລະບຽບ, ຂໍ້ຕົກລົງ ແລະ ແລະ ລະບຽບການໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີ

ສຈ. ປອ. ກິແກ້ວ ໄຂຄຳພິທູນ